Khammorane Pouang

MAF → PFO
approving quota
+ Forest mgt
plan.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ 10 066 /ກປ

ນະຄອນຫຼວງວຽງຈັນ, ວັນທີ ...09 DEC 2014

ເຖິງ: ທ່ານຫົວໜ້າ ພະແນກກະສິກຳ ແລະ ປ່າໄມ້ແຂວງ ຄຳມ່ວນ.

ເລື່ອງ: ມອບແຜນການປູກໄມ້ ຟື້ນຟູປ່າ, ການຂຸດຄົ້ນໄມ້ ແລະ ເກັບກູ້ເຄື່ອງປ່າຂອງດົງ ໃຫ້ຈັດຕັ້ງປະຕິບັດ ໃນສົກປີ 2014-2015.

ອີງຕາມ ແຈ້ງການ ຂອງລັດຖະມົນຕີ, ຫົວໜ້າຫ້ອງວ່າການລັດຖະບານ ສະບັບເລກທີ 1696/ຫລບ.ກລຂ ລົງວັນທີ 21/06/2014.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ໄດ້ອອກແຈ້ງການ:

1. ມອບແຜນການປູກໄມ້ ແລະ ຟື້ນຟູປ່າ ໃຫ້ຈັດຕັ້ງປະຕິບັດ ດັ່ງລຸ່ມນີ້:
   - 1.1. ເກັບແກ່ນໄມ້ ຈຳນວນ 1.000 (ໜຶ່ງພັນ) ກິໂລ.
   - 1.2. ຜະລິດເບ້ຍໄມ້ ຈຳນວນ 1.500.000 (ໜຶ່ງລ້ານຫ້າແສນ) ເບ້ຍ.
   - 1.3. ປູກໄມ້ໃຫ້ໄດ້ ຈຳນວນ 1.500 (ໜຶ່ງພັນຫ້າຮ້ອຍ) ເຮັກຕາ.
   - 1.4. ກຳນົດເຂດຟື້ນຟູປ່າໄມ້ ທັງໝົດ ຈຳນວນ 21.052 (ຊາວເອັດພັນຫ້າສິບສອງ) ເຮັກຕາ ໃນນີ້: ໃນເຂດປ່າຜະລິດ ຈຳນວນ 8.137 (ແປດພັນໜຶ່ງຮ້ອຍສາມສິບເຈັດ) ເຮັກຕາ ແລະ ນອກເຂດ 3 ປະເພດປ່າ ຈຳນວນ 12.915 (ສິບສອງພັນເກົ້າຮ້ອຍສິບຫ້າ) ເຮັກຕາ.

2. ມອບແຜນການຂຸດຄົ້ນໄມ້ຈຳນວນ 10.066,535 (ສິບພັນຫົກສິບຫົກຈຸດຫ້າຮ້ອຍສາມສິບຫ້າ) ແມັດກ້ອນ ໃນນີ້ມີ:
   - 2.1. ຈຳນວນ 1.382,385 (ໜຶ່ງພັນສາມຮ້ອຍແປດສິບສອງຈຸດສາມຮ້ອຍແປດສິບຫ້າ) ແມັດກ້ອນ, ຈະຂຸດຄົ້ນ ໃນເຂດໂຄງການກໍ່ສ້າງສະໜາມຝຶກແອບທະຫານ ໃນເນື້ອທີ່ 1.039 ເຮັກຕາ ເຂດບ້ານນາສະອາດ, ເມືອງ ທ່າແຂກ ຈຳນວນ 669 ຕົ້ນ.
   - 2.2. ຈຳນວນ 4.578,00 (ສີ່ພັນຫ້າຮ້ອຍເຈັດສິບແປດ) ແມັດກ້ອນ, ຈະຂຸດຄົ້ນໃນເຂດໂຄງການສຳປະທານຂຸດຄົ້ນແຮ່ກົ່ວ (ເຂດປ່າສະຫງວນ ພູຫີນປູນ) ບ້ານ ທ່າຍົ້, ເມືອງ ຫີນບູນ.
   - 2.3. ຈຳນວນ 762,852 (ເຈັດຮ້ອຍຫົກສິບສອງຈຸດແປດຮ້ອຍຫ້າສິບສອງ) ແມັດກ້ອນ, ຈະຂຸດຄົ້ນໃນເຂດສຳປະທານຂຸດຄົ້ນຫີນປູນ ຂອງບໍລິສັດ ແສງມະນີ ການຄ້າ ຂາອອກ-ຂາເຂົ້າ ຈຳກັດ ໃນເນື້ອທີ່ 5.388 ເຮັກຕາ.

2.4. ຈຳນວນ 2.687,570 (ສອງພັນຫົກຮ້ອຍແປດສິບເຈັດຈຸດຫ້າຮ້ອຍເຈັດສິບ) ແມັດກ້ອນ, ຈະຂຸດຄົ້ນໃນເຂດໂຄງການກໍ່ສ້າງເຂື່ອນໄຟຟ້າ ທົ່ງລີມ ໃນເນື້ອທີ່ 53 ກິໂລຕາແມັດ, ເຂດບ້ານ ທົ່ງລີມ, ເມືອງ ຄູນຄຳ.

2.5. ຈຳນວນ 655,728 (ຫົກຮ້ອຍຫ້າສິບຫ້າຈຸດເຈັດຮ້ອຍຊາວແປດ) ແມັດກ້ອນ, ຈະຂຸດຄົ້ນໃນເຂດປ່າຊົມໃຊ້ຂອງບ້ານ, ເຂດບ້ານ ກະແສ, ເມືອງ ໄຊບົວທອງຂອງບໍລິສັດອຸດສາຫະກຳໄມ້ພູດອຍເລືອງຟັດຣິງ.

ໄມ້ຈຳນວນທີ່ກ່າວຂ້າງເທິງນີ້ໃຫ້ຈັດສັນແບ່ງປັນໃຫ້ໂຮງງານປຸງແຕ່ງໄມ້ ຂອງຫ້ອງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຂັ້ນສູນກາງຈຳນວນ 2.000,00( ສອງພັນ) ແມັດກ້ອນ ໂດຍປະຕິບັດຕາມຂໍ້ຕົກລົງຂອງລັດຖະບານສະບັບເລກທີ 43/ນຍ, ລົງວັນທີ 13/05/2010.

ມອບແຜນການເກັບກູ້ເຄື່ອງປ່າຂອງດົງ ໃຫ້ຈັດຕັ້ງປະຕິບັດດັ່ງລຸ່ມນີ້:

2.6. ໄມ້ປ່ອງ ຈຳນວນ 15.000 (ສິບຫ້າພັນ) ລຳ.

2.7. ໄມ້ຖ້ຳແບບ ຈຳນວນ 40.000 (ສີ່ສິບພັນ) ລຳ.

2.8. ຟືນ ຈຳນວນ 10.000 (ສິບພັນ) ຫຼາ.

2.9. ຫຼັກຮົ້ວ ຈຳນວນ 3.000 (ສາມພັນ) ຫຼັກ.

2.10. ດອກແຂມ ຈຳນວນ 30 (ສາມສິບ) ໂຕນ.

2.11. ເຄືອແຫມ ຈຳນວນ 50 (ຫ້າສິບ) ໂຕນ.

2.12. ໝາກຕາວ ຈຳນວນ 30 (ສາມສິບ) ໂຕນ.

2.13. ຂີ້ຊີ ຈຳນວນ 100 (ໜຶ່ງຮ້ອຍ) ໂຕນ.

2.14. ຈັນໃດ ຈຳນວນ 39 (ສາມສິບເກົ້າ) ໂຕນ.(ໃຫ້ເກັບກູ້ເອົາແຕ່ສິ້ນສ່ວນທີ່ໂຄກຢູ່ຕາມດິນ)

2.15. ຈັນຂາວ ຈຳນວນ 60 (ຫົກສິບ) ໂຕນ.(ໃຫ້ເກັບກູ້ເອົາແຕ່ຕົ້ນທີ່ຕາຍແລ້ວ)

3. ນອກຈາກແຜນການຂຸດຄົ້ນໄມ້ທີ່ກ່າວມາຂ້າງເທິງນີ້, ຫ້າມອອກອະນຸຍາດຂຸດຄົ້ນໄມ້ ແລະ ເກັບກູ້ໄມ້ເພີ່ມອີກ, ການຂຸດຄົ້ນໄມ້ອອກຈາກແລວທາງ ແມ່ນບໍ່ໃຫ້ກາຍເບື້ອງລະ 5 ແມັດ ແຕ່ຂອບທາງອອກໄປ.

4. ໄມ້ສວນປູກ ອະນຸຍາດໃຫ້ຂຸດຄົ້ນໄດ້ຕະຫຼອດປີ, ຖ້າຢູ່ໃນຊ່ວງໄລຍະປິດປ່າໃຫ້ສັງລວມຜົນການຈັດຕັ້ງປະຕິບັດເຂົ້າໃນສົກປີຕໍ່ໄປ. ສ່ວນການຂົນສົ່ງຕ້ອງໄດ້ປະຕິບັດຕາມລະບຽບການຂອງກະຊວງໂຍທາທິການ ແລະ ຂົນສົ່ງ ວາງອອກ.

5. ສຳລັບ ການຂຸດຄົ້ນໄມ້ຟືນ, ໄມ້ເພື່ອຜະລິດຖ່ານ, ໄມ້ຫຼັກຮົ້ວ, ໄມ້ຖ້ຳແບບ ເພື່ອເປົ້າໝາຍທຸລະກິດແມ່ນໃຫ້ປະຕິບັດຕາມ ບົດແນະນຳ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0058/ກປ, ລົງວັນທີ 27/04/2012, ຂໍ້ 3.7.

6. ໃຫ້ເພີ່ມທະວີ ການປົກປັກຮັກສາເນື້ອທີ່ປ່າໄມ້ ທີ່ຍັງບໍ່ທັນໄດ້ກຳນົດເຂົ້າ ໃນສາມປະເພດປ່າຢ່າງເຂັ້ມງວດ.

7. ສຳລັບ ເຄື່ອງປ່າຂອງດົງ ທີ່ໃຫ້ຜົນຜະລິດຕາມລະດູການ (ຢູ່ໃນຊ່ວງໄລຍະປິດປ່າ) ໃຫ້ເກັບກູ້ອອກມາ ແຕ່ໃຫ້ສັງລວມເຂົ້າໃນແຜນການສົກປີຕໍ່ໄປ.

8. ແຜນສະເໜີຂໍອະນຸມັດການປູກໄມ້, ຟື້ນຟູປ່າ,ການຂຸດຄົ້ນໄມ້ ແລະ ເກັບກູ້ເຄື່ອງປ່າຂອງດົງ ໃນສົກປີ 2015-2016 ໃຫ້ສົ່ງ ກົມປ່າໄມ້ ໃນຕົ້ນເດືອນ ມີນາ 2015 ເພື່ອຈະໄດ້ສັງລວມລາຍງານໃຫ້ກະຊວງກະສິກຳ ແລະ ປ່າໄມ້ ໃນຕົ້ນເດືອນ ເມສາ ເພື່ອລາຍງານຂັ້ນເທິງພິຈາລະນາ. ສຳລັບແຜນການຂຸດຄົ້ນໄມ້ ຕ້ອງຢູ່ໃນເຂດ

ກໍ່ສ້າງພື້ນຖານໂຄງລ່າງ ແລະ ເຂດບຸກເບີກເນື້ອທີ່ຕ່າງໆ ທີ່ລັດຖະບານອະນຸມັດ ແຕ່ຕ້ອງໄດ້ສຳຫຼວດຂຶ້ນບັນຊີໃຫ້ລະອຽດຈະແຈ້ງ.

9. ການສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດ ແຜນການປູກໄມ້ ແລະ ຟື້ນຟູປ່າ, ແຜນການຂຸດຄົ້ນໄມ້ ແລະ ເກັບກູ້ເຄື່ອງປ່າຂອງດົງ, ໃຫ້ລາຍງານກົມປ່າໄມ້ເປັນແຕ່ລະ ອາທິດ, 1 ເດືອນ, 3 ເດືອນ, 6 ເດືອນ, 9 ເດືອນ ແລະ 1 ປີ, ໃນນັ້ນ ໃຫ້ຕີລາຄາ ແລະ ວິເຄາະບັນຫາ ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະ ມາດຕະການແກ້ໄຂ ກ່ຽວກັບ ຜົນການຈັດຕັ້ງ ປະຕິບັດ ແຕ່ລະດ້ານໃຫ້ຊັດເຈນ ເພື່ອເປັນບ່ອນອີງໃນການປັບປຸງແກ້ໄຂໃນຕໍ່ໜ້າ.

10. ເປັນເຈົ້າການ ປະສານສົມທົບກັບ ພາກສ່ວນກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດ ແຈ້ງການ ສະບັບນີ້ ໃຫ້ມີປະສິດທິຜົນ ໂດຍຖືກຕ້ອງ ແລະ ສອດຄ່ອງກັບ ບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບການຄຸ້ມຄອງປ່າໄມ້ໃຫ້ເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້

ວິໄລວັນ ພົມເຂ

ບ່ອນສົ່ງ:

| | |
|---|---|
| -ຫ້ອງວ່າການລັດຖະບານ | 01 ສະບັບ (ເພື່ອລາຍງານ ). |
| -ຄະນະກວດກາລັດຖະບານ | 01 ສະບັບ (ເພື່ອລາຍງານ ). |
| -ກະຊວງການເງິນ | 01 ສະບັບ (ເພື່ອຊ່ວຍຕິດຕາມ ). |
| -ກະຊວງອ/ກ ແລະການຄ້າ | 01 ສະບັບ (ເພື່ອຊ່ວຍຕິດຕາມ ). |
| -ການເຈົ້າແຂວງ | 01 ສະບັບ (ເພື່ອຊາບແລະຊີ້ນຳ ). |
| -ກົມປ່າໄມ້ | 01 ສະບັບ (ເພື່ອຕິດຕາມ, ຊຸກຍູ້). |
| -ກົມກວດກາປ່າໄມ້ | 01 ສະບັບ (ເພື່ອຊ່ວຍຕິດຕາມ ). |
| -ກົມກວດກາກະຊວງກະສິກຳ ແລະປ່າໄມ້ | 01ສະບັບ(ເພື່ອຊ່ວຍຕິດຕາມ). |
| -ພະແນກ ອ/ກແລະການຄ້າແຂວງ | 01 ສະບັບ (ເພື່ອໃຫ້ການຮ່ວມມື). |
| -ພະແນກ ການເງິນແຂວງ | 01 ສະບັບ (ເພື່ອໃຫ້ການຮ່ວມມື). |
| -ພະແນກປ່າໄມ້ແຂວງ | 01 ສະບັບ (ເພື່ອຈັດຕັ້ງປະຕິບັດ). |
| -ໜ່ວຍກວດກາປ່າໄມ້ ແຂວງ | 01 ສະບັບ (ເພື່ອຊ່ວຍຕິດຕາມ ). |
| -ເກັບມ້ຽນສຳເນົາ | 05 ສະບັບ. |